ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1101

ກະຊວງສາທາລະນະສຸກ ເລກທີ /ສທ

ນະຄອນຫລວງວຽງຈັນ, ວັນທີ 24 SEP 2021

# ຄຳສັ່ງ

## ວ່າດ້ວຍການນຳເຂົ້າ, ຈໍລະຈອນຈຳໜ່າຍ ແລະ ນຳໃຊ້ ເຄື່ອງທົດສອບແບບໄວ (AgRDT) ເພື່ອວິເຄາະຊອກຫາການຕິດເຊື້ອພະຍາດ COVID-19

ເຖິງ: ບັນດາທ່ານ ຜູ້ອຳນວຍການໂຮງໝໍຂັ້ນສູນກາງ, ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຜູ້ອຳນວຍການໂຮງໝໍໃນແຕ່ລະຂັ້ນ, ຜູ້ປະກອບການ ທັງພາກລັດ ແລະ ເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບປັບປຸງ ເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ ສະບັບປັບປຸງ ເລກທີ 017/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຄຳສັ່ງຂອງລັດຖະມົນຕີກະຊວງສາທາລະນະສຸກ ສະບັບເລກທີ 0246/ສທ, ລົງວັນທີ 03 ມີນາ 2020;
- ອີງຕາມ ສະພາບການແຜ່ລະບາດຂອງພະຍາດ COVID-19 ຢູ່ໃນໂລກ ແລະ ຢູ່ ສປປ ລາວ ໃນປະຈຸບັນ.

ປະຈຸບັນ, ກະຊວງສາທາລະນະສຸກ ໄດ້ສຸມໃສ່ວຽກງານການເຝົ້າລະວັງ ແລະ ປິ່ນປົວພະຍາດ COVID-19 ຢ່າງເຂັ້ມງວດເນື່ອງຈາກການລະບາດ ມີທ່າອ່ຽງເພີ່ມຂຶ້ນກະຈາຍຢູ່ຫຼາຍແຂວງ ເຊິ່ງພົບຈຳນວນຜູ້ຕິດເຊື້ອເພີ່ມຂຶ້ນ ແລະ ແຜ່ລາມອອກໄປສູ່ຊຸມຊົນ, ໃນການວິເຄາະ ເພື່ອຊອກຫາການຕິດເຊື້ອພະຍາດ COVID-19 ແມ່ນໄດ້ນຳໃຊ້ເຄື່ອງ Real Time Polymerase Chain Reaction (RT-PCR) ທີ່ສາມາດຢັ້ງຢືນການບົ່ງມະຕິພະຍາດທີ່ມີຄວາມຊັດເຈນສູງ ນອກຈາກນັ້ນ, ກໍ່ແມ່ນການນຳໃຊ້ເຄື່ອງທົດສອບແບບໄວ (AgRDT).

ສະນັ້ນ, ເພື່ອເຮັດໃຫ້ວຽກງານການເຝົ້າລະວັງ ແລະ ປ້ອງກັນ ການແຜ່ລະບາດຂອງພະຍາດ COVID-19 ໂດຍສະເພາະ ວຽກງານການກວດວິເຄາະ ໃນການນຳໃຊ້ເຄື່ອງທົດສອບແບບໄວ (AgRDT) ໃຫ້ມີປະສິດທິພາບ, ປະສິດທິຜົນສູງ, ສາມາດຄົ້ນຫາຜູ້ຕິດເຊື້ອ ໄດ້ຢ່າງທັນການ ແລະ ສອດຄ່ອງກັບລະບຽບກົດໝາຍ ແລະ ນະໂຍບາຍ ຂອງລັດຖະບານ.

**ລັດຖະມົນຕີ ຈຶ່ງໄດ້ອອກຄຳສັ່ງ ດັ່ງນີ້:**

1. ອະນຸຍາດໃຫ້ນຳໃຊ້ເຄື່ອງທົດສອບແບບໄວ (AgRDT) ສຳລັບພາກລັດ ທີ່ມີເງື່ອນໄຂ ແລະ ປະຕິບັດຕາມຍຸດທະສາດ ການສ້າງຂີດຄວາມສາມາດຂອງການກວດວິເຄາະ ຂອງກະຊວງສາທາລະນະສຸກ.
2. ຄົ້ນຄວ້າ ແລະ ພິຈາລະນາ ອະນຸຍາດການນຳໃຊ້ ເຄື່ອງທົດສອບແບບໄວ (AgRDT) ສຳລັບຂົງເຂດໂຄງການພັດທະນາຂອງລັດຖະບານ ແລະ ເຂດອຸດສາຫະກຳທີ່ມີແຮງງານເປັນຈຳນວນຫຼາຍ ມີເງື່ອນໄຂໃນການກວດ, ໄດ້ຜ່ານ



สแกนด้วย CamScanner

ການອົບຮົມ, ຜ່ານການປະເມີນຄວາມສາມາດ ໂດຍກະຊວງສາທາລະນະສຸກ, ພ້ອມທັງເປັນເຈົ້າການໃນການຈັດຕັ້ງປະຕິບັດ ຕາມຍຸດທະສາດການສ້າງຂີດຄວາມສາມາດຂອງການກວດວິເຄາະ ຂອງກະຊວງສາທາລະນະສຸກ.

3. ຫ້າມບຸກຄົນ ຫຼື ນິຕິບຸກຄົນ ນໍາເຂົ້າເຄື່ອງທົດສອບແບບໄວ (AgRDT) ເພື່ອວິເຄາະຊອກຫາການຕິດເຊື້ອພະຍາດ COVID-19 ມາຈໍາໜ່າຍຢູ່ໃນ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຢ່າງເດັດຂາດ.
4. ຫ້າມບຸກຄົນ ແລະ ບັນດາສະຖານທີ່ບໍລິການພາກເອກະຊົນ ໃນຂອບເຂດທົ່ວປະເທດ ນໍາໃຊ້ເຄື່ອງທົດສອບແບບໄວ (AgRDT) ເພື່ອວິເຄາະຊອກຫາການຕິດເຊື້ອພະຍາດ COVID-19 ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຢ່າງເດັດຂາດ.
5. ຖ້າບຸກຄົນ ຫຼື ພາກສ່ວນໃດ ຫາກລະເມີດຄໍາສັ່ງສະບັບນີ້ ຈະຖືກກ່າວເຕືອນ, ອາຍັດ, ປັບໄໝ ແລະ ລົງໂທດຕາມລະບຽບກົດໝາຍ ທີ່ໄດ້ກໍານົດໄວ້ຢ່າງເຂັ້ມງວດ.
6. ໃນກໍລະນີພົບເຫັນການນໍາໃຊ້ເຄື່ອງດັ່ງກ່າວ ໃນສະຖານທີ່ທີ່ບໍ່ໄດ້ຮັບອະນຸຍາດ ໃຫ້ແຈ້ງມາຍັງການຈັດຕັ້ງກ່ຽວຂ້ອງຂອງກະຊວງສາທາລະນະສຸກ ຫຼື ລາຍງານໃຫ້ສາຍດ່ວນ 165 ຫຼື 166.
7. ສໍາລັບເຄື່ອງກວດວິເຄາະ AgRDT ທີ່ອະນຸຍາດນໍາເຂົ້າຕ້ອງຢູ່ໃນບັນຊີລາຍການຮັບຮອງຄຸນນະພາບ ຈາກອົງການອະນາໄມໂລກ (EUL) https://extranet.who.int/pqweb/sites/default/files/documents/210430_EUL_SARS-CoV-2_product_list.pdf ແລະ ໄດ້ຜ່ານການຮັບຮອງໂດຍອົງການຄຸ້ມຄອງດ້ານຢາຂອງບາງປະເທດ ທີ່ມີຄວາມເຂັ້ມແຂງ Stringent Regulatory Authorities (SRAs) ແລະ ປະເທດຈີນ.
8. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ສະບັບເລກທີ 0246/ສທ, ລົງວັນທີ 03 ມີນາ 2020.

ລັດຖະມົນຕີ

ປອ.ດຣ. ບຸນແຝງ ພູມມະໄລສິດ



สแกนด้วย CamScanner